ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານຜູ້ວ່າການ ທຫລ ຊີ້ນໍາວຽກງານຢູ່ແຂວງຊຽງຂວາງ





ໃນລະຫວ່າງວັນທີ 25-27 ກຸມພາ 2022 ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວວຽກງານທາງລັດຖະການຢູ່ ສາຂາ ທຫລ ພາກເໜືອແຂວງຊຽງຂວາງ.



ຈຸດປະສົງຂອງການລົງເຄື່ອນໄຫວວຽກງານໃນຄັ້ງນີ້ແມ່ນເພື່ອປະກາດການປັບປຸງການຈັດຕັ້ງຂັ້ນຮອງຫົວໜ້າສາຂາ ທຫລ ພາກເໜືອ ທີ່ແຂວງຊຽງຂວາງ ເຊິ່ງໄດ້ແຕ່ງຕັ້ງທ່ານ ດອນສະຖຽນ ບຸນມີອາໄພ ຊ່ວຍວຽກໂຮງພິມທະນະບັດ ທຫລ ເປັນ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງຊຽງຂວາງ. ພ້ອມນີ້, ຄະນະທ່ານຜູ້ວ່າການ ທຫລ ຍັງໄດ້ພົບປະໂອ້ລົມກຸ່ມທະນາຄານທຸລະກິດເພື່ອຕິດຕາມຊຸກຍູ້ວຽກງານຄຸ້ມຄອງຮ້ານແລກປ່ຽນເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບຽບການຍິ່ງຂຶ້ນ ແລະ ວຽກງານອື່ນໆທີ່ຕິດພັນກັບການດຳເນີນທຸລະກິດທະນາຄານໃນເງື່ອນໄຂທີ່ເສດຖະກິດທັງພາຍໃນ ແລະ ສາກົນມີຄວາມຫຍຸ້ງຍາກສັບສົນໃນຫຼາຍດ້ານ. ພ້ອມດຽວກັນນີ້, ຍັງໄດ້ຢ້ຽມຢາມຂົງເຂດການຜະລິດກະສິກຳຟາມງົວເອກະຊົນລາວ ແລະຟາມງົວທີ່ເປັນໂຄງການລົງທຶນຈາກຕ່າງປະເທດ ເພື່ອແລກປ່ຽນຂໍ້ສະດວກ-ຂໍ້ຫຍຸ້ງຍາກ, ແຜນການຂະຫຍາຍທຸລະກິດ, ການໂອນເງິນເຂົ້າອອກປະເທດເພື່ອການລົງທຶນໃນໂຄງການດັ່ງກ່າວ ແລະທຫລ ຈະຊຸກຍູ້ສົ່ງເສີມອຳນວຍຄວາມສະດວກຮອບດ້ານຕາມພາລະບົດບາດໜ້າທີ່ຂອງ ທຫລ.



ນະໂອກາດດັ່ງກ່າວ, ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະຍັງໄດ້ເຂົ້າຢ້ຽມຂ່ຳນັບຄະນະນຳແຂວງຊຽງຂວາງ ເພື່ອລາຍງານສະພາບການປະຕິບັດວຽກງານຂອງ ສາຂາ ທຫລ ແລະແລກປ່ຽນສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງທີ່ຕິດພັນກັບຂົງເຂດທະນາຄານດ້ວຍບັນຍາກາດອັນອົບອຸ່ນ.

#ພາບ ແລະ ຂ່າວໂດຍ: ໜ່ວຍງານຂ່າວສານ ທຫລ

**ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**